# ແຕ່ເກີດເຖິງຫົກປີ – ການເຕີບໂຕ ແລະ ພັດທະນາການ

*ກະລຸນາຖາມ. ເດັກນ້ອຍລໍຖ້າບໍ່ໄດ້.*

Washington State Department of
CHILDREN, YOUTH & FAMILIES

## ແມ່ນຫຍັງ

ຕາຕະລາງແຜນຜັງນີ້ຂຽນຂຶ້ນສຳລັບພໍ່ແມ່, ແຕ່ຜູ້ທີ່ຮູ້ຈັກ ແລະ ເຮັດວຽກກັບເດັກນ້ອຍຈະເຫັນວ່າມັນມີປະໂຫຍດ.

## ຍ້ອນຫຍັງ

ຕາຕະລາງແຜນຜັງການກວດກ່ອນນີ້ແມ່ນວິທີການຊ່ວຍເຫຼືອໃຫ້ທ່ານຮຽນຮູ້ຂີດຈຳກັດບັນຫາທີ່ເປັນໄດ້ຢູ່ໃນສາຍຕາ, ການຟັງສຽງ ແລະ ພັດທະນາການຂອງເດັກໄດ້ໄວ. ຕາຕະລາງແຜນຜັງຈະຊ່ວຍທ່ານເບິ່ງເດັກໄດ້ທັງໝົດໂຕ. ທ່ານຈະຕິດຕາມເບິ່ງພັດທະນາການຂອງເດັກໃນດ້ານການຄິດ, ທັກສະທາງສັງຄົມ, ການຟັງ, ການເວົ້າ ແລະ ກິດຈະກຳການເຄື່ອນໄຫວ. ບາງທັກສະຂອງການເຄື່ອນໄຫວໃຊ້ກ້າມເນື້ອເລັກນ້ອຍ (ເຊັ່ນ: ນິ້ວມື), ທັກສະອື່ນໆໃຊ້ກ້າມເນື້ອຫຼາຍ (ເຊັ່ນ: ຂາ). ມີຄວາມສຳຄັນຫຼາຍທີ່ຕ້ອງຕິດຕາມເບິ່ງສາຍຕາ ແລະ ການໄດ້ຍິນສຽງຂອງເດັກໃນທຸກໆອາຍຸ.

**ສິ່ງສຳຄັນ!** ຕາຕະລາງແຜນພາບນີ້ແມ່ນວິທີຊ່ວຍໃຫ້ທ່ານຕິດຕາມເບິ່ງສາຍຕາ, ການຟັງສຽງ ແລະ ພັດທະນາການຂອງເດັກໄດ້ຢ່າງໄວ ແລະ ບໍ່ແມ່ນເຈດຕະນາທີ່ຈະເປັນການທົດສອບພັດທະນາການ, ການປະເມີນພັດທະນາການ.





## ແນວໃດ

ແຕ່ລະພາກອາຍຸແມ່ນມີລາຍການກິດຈະກຳທີ່ເດັກນ້ອຍສ່ວນໃຫຍ່ສາມາດຈະເຮັດໄດ້ໃນບາງຄັ້ງລະຫວ່າງອາຍຸຂັ້ນທຳອິດຫາອາຍຸຂັ້ນທີສອງຢູ່ໃນພາກນັ້ນ. ຕົວຢ່າງ, ໃນ 12 ເດືອນ, ເດັກນ້ອຍສ່ວນໃຫຍ່ຈະສາມາດເຮັດທຸກກິດຈະກຳທີ່ຢູ່ໃນລາຍການໄດ້ໃນພາກ 6 ຫາ 12 ເດືອນ. ເຖິງແນວໃດກໍ່ຕາມ, ເດັກນ້ອຍສ່ວນໃຫຍ່ຈະບໍ່ສາມາດເຮັດກິດຈະກຳທຸກຢ່າງເຫຼົ່ານີ້ໄດ້ໃນ 6 ເດືອນ. ຖືກຕ້ອງເປັນຈິງຄືກັນໃນແຕ່ລະພາກອາຍຸ. ດັ່ງນັ້ນ, ຢ່າກັງວົນຫຼາຍເກີນໄປ ຖ້າເດັກນ້ອຍຢູ່ໃນຕອນເລີ່ມຕົ້ນຂອງລະດັບອາຍຸບໍ່ສາມາດເຮັດໄດ້ທຸກກິດຈະກຳ. ເນື່ອງຈາກວ່າເດັກນ້ອຍພັດທະນາໃນອັດຕາຕ່າງກັນ, ຢ່າຢ້ານວ່າເດັກນ້ອຍຈະເຮັດກິດຈະກຳບໍ່ທັນ.

ອ່ານກິດຈະກຳທີ່ເຮັດເປັນລາຍການໄວ້ຢູ່ພາຍໃຕ້ອາຍຸຂອງເດັກ ແລະ ພາຍໃຕ້ສາຍຕາ ແລະ ການໄດ້ຍິນສຽງ. ເບິ່ງ ແລະ ຟັງໃນເວລາເດັກຫຼິ້ນ. ເດັກສາມາດເຮັດກິຈະກຳໄດ້ບໍ? ສິ່ງສຳຄັນແມ່ນໃຫ້ເດັກມີເວລາ, ສະຖານທີ່ ແລະ ອຸປະກອນທີ່ຈຳເປັນສຳລັບແຕ່ລະກິດຈະກຳ. ຕົວຢ່າງ, ຢ່າເວົ້າວ່າ ເດັກນ້ອຍບໍ່ສາມາດແຕ້ມຮູບໃບໜ້າໄດ້ ຖ້າທ່ານຍັງບໍ່ເອົາເຈ້ຍ ແລະ ສໍ ຫຼື ສໍສີໃຫ້ເດັກນ້ອຍເທື່ອ.

ທ່ານອາດຈະຢາກເບິ່ງ ແລະ ຟັງເດັກນ້ອຍຕະຫຼອດເວລາຫຼາຍອັນດ້ວຍການໃຊ້ຕາຕະລາງແຜນພາບບັນທຶກສິ່ງທີ່ກັງວົນໃຈໃດໜຶ່ງທີ່ທ່ານອາດຈະມີ. ຖ້າເດັກນ້ອຍທີ່ເລືອກໃນລະດັບອາຍຸສູງຂຶ້ນບໍ່ສາມາດເຮັດທຸກກິດຈະກຳໄດ້, ຄອບຄົວສາມາດແລກປ່ຽນການສັງເກດເຫັນຂອງພວກເຂົາກັບຜູ້ຊ່ຽວຊານຜູ້ທີ່ສາມາດເບິ່ງພັດທະນາການຂອງເດັກຢ່າງໃກ້ຊິດໄດ້.

## ເມື່ອໃດ

ເບິ່ງ ແລະ ຟັງໃນເວລາເດັກຫຼິ້ນ. ທ່ານກຳລັງຊອກຫາສິ່ງທີ່ເດັກນ້ອຍເປັນຢູ່ຕາມປົກກະຕິ. **ຢ່າໃຊ້ຕາຕະລາງແຜນພາບນີ້ເມື່ອເດັກນ້ອຍບໍ່ສະບາຍ, ເມື່ອຍ ຫຼື ອາລົມບໍ່ດີ.**

## ຕໍ່ໄປແມ່ນຫຍັງ

ທ່ານສາມາດໂທຫາເບີຂອງ Help Me Grow Washington ທີ່ເຮັດເປັນລາຍການໄວ້ຢູ່ອີກດ້ານໜຶ່ງຂອງເອກະສານຕີພິມເຜີຍແຜ່ນີ້ສຳລັບຊື່ຂອງ Lead Family Resources Coordinator (FRC) ປະຈຳທ້ອງຖິ່ນຢູ່ໃນພື້ນທີ່ຂອງທ່ານ ຖ້າທ່ານມີຄວາມກັງວົນໃຈກ່ຽວກັບພັດທະນາການຂອງເດັກ. ນອກນັ້ນ, ທ່ານໝໍຂອງເດັກ, ພະແນກສາທາລະນະສຸກ ຫຼື ເຂດໂຮງຮຽນຍັງສາມາດຊ່ວຍຄອບຄົວ ແລະ ທ່ານຊອກຫາໜ່ວຍງານທີ່ຢູ່ໃກ້ທີ່ສາມາດເຮັດການກວດພັດທະນາການ, ສາຍຕາ ຫຼື ການຟັງສຽງຂອງເດັກຄືນຊຸດໄດ້.



## ສາຍຕາ

*ລູກຂອງທ່ານ...*

- ☐ ເຮັດການສຳຜັດຕາ (ເບິ່ງທີ່ຕາຂອງທ່ານ)
- ☐ ໃຊ້ຕາຂອງພວກເຂົາຕິດຕາມເບິ່ງວັດຖຸເຄື່ອນໄຫວຢູ່
- ☐ ຍ່າງ ຫຼື ຄານໂດຍທີ່ບໍ່ຄ່ອຍຕຳກັບສິ່ງຂອງຕ່າງໆ
- ☐ ເບິ່ງຄົນ ຫຼື ສິ່ງຕ່າງໆດ້ວຍການໃຊ້ຕາທັງສອງເບື້ອງ
- ☐ ຈັບສິ່ງຂອງຕ່າງໆໃນໄລຍະຫ່າງປົກກະຕິ (ຫຼັງຈາກອາຍຸໄດ້ 6 ເດືອນ)
- ☐ ຍ່າງ ຫຼື ຄານຂ້າມເງົາ ຫຼື ບ່ອນທີ່ເຫັນແຕກຕ່າງໄດ້ຢ່າງຄ່ອງຕົວ (ຜ້າພົມ, ກະໂລ່)
- ☐ ເບິ່ງຄົນ ຫຼື ສິ່ງຂອງຕ່າງໆໂດຍທີ່ຕາບໍ່ເບິ່ງຂ້າມ ຫຼື ເຫຼ່ອ (ຫຼັງຈາກ 9 ເດືອນ)
- ☐ ມີຕາໃສ, ບໍ່ແດງ ຫຼື ມີນ້ຳເຕັມ

## ການໄດ້ຍິນສຽງ

*ລູກຂອງທ່ານເຮັດໃນສິ່ງຕໍ່ໄປນີ້ບໍ...*

- ☐ ສະແດງຄວາມຮັບຮູ້ສຽງດັງໃນບ້ານ (ໂທລະສັບ, ສຽງເຄາະປະຕູ, ໂທລະພາບ)
- ☐ ໃຊ້ສຽງທີ່ບໍ່ດັງ ຫຼື ຄ່ອຍເກີນໄປ
- ☐ ຫຼິ້ນເຄື່ອງຫຼິ້ນທີ່ມີສຽງດັງ (ເຄື່ອງຫຼິ້ນສຽງດັງ, ກະດິ່ງ)
- ☐ ຮຽນແບບສຽງ (ຫຼັງຈາກ 1 ປີ)
- ☐ ໃຊ້ການຈົບລົງທ້າຍຄຳເວົ້າບາງຄຳ (ຕົວ "s" ຫຼື "ing") ຫຼັງຈາກສອງປີ
- ☐ ໄປຕາມທິດທາງທີ່ບອອກ
- ☐ ໃຫ້ຮັກສາລະດັບສຽງໂທລະພາບ ຫຼື ວິທະຍຸໄວ້ລະດັບປານກາງ
- ☐ ຟັງນິທານ, ບັນທຶກ ຫຼື ໂທລະພາບໄດ້ໂດຍບໍ່ມີຄວາມຫຍຸ້ງຍາກ
- ☐ ເວົ້າເພື່ອໃຫ້ຄົນສ່ວນໃຫຍ່ສາມາດເຂົ້າໃຈໄດ້ (ຖ້າອາຍຸແກ່ກວ່າ 2-1/2 ປີ)
- ☐ ມາຫາທ່ານເມື່ອຮ້ອງຫາຈາກຫ້ອງອື່ນ (ຫຼັງຈາກ 2 ປີ)



# ແຕ່ເກີດເຖິງຫົກປີ – ການເຕີບໂຕ ແລະ ພັດທະນາການ

*ກະລຸນາຖາມ. ເດັກນ້ອຍລໍຖ້າບໍ່ໄດ້.*

Washington State Department of
CHILDREN, YOUTH & FAMILIES

## ສຳລັບພໍ່ແມ່:

ໃນຖານະເປັນພໍ່ແມ່, ທ່ານເປັນຄົນສຳຄັນທີ່ສຸດໃນຊີວິດຂອງລູກຂອງທ່ານ. ທ່ານຮູ້ຈັກລູກຂອງທ່ານດີທີ່ສຸດ. ຖ້າທ່ານມີຂໍ້ຂ້ອງໃຈກ່ຽວກັບພັດທະນາການຂອງລູກທ່ານ, ທ່ານສາມາດຂໍການປະເມີນໄດ້. ຖ້າທ່ານມີຄຳຖາມ ຫຼື ຂໍ້ຂ້ອງໃຈ ແມ່ນໃຫ້ຖາມ. ໂທຫາ Help Me Grow Washington ສຳລັບຊື່ຂອງ Family Resources Coordinator (FRC) ໃນທ້ອງຖິ່ນຜູ້ທີ່ສາມາດຊ່ວຍທ່ານໄດ້.

## ສຳລັບຜູ້ໃຫ້ບໍລິການ:

ເດັກນ້ອຍເຕີບໃຫຍ່ ແລະ ພັດທະນາໃນວິທີຕ່າງໆ. ກະລຸນາພະຍາຍາມ ແລະ ລົມກັບຄອບຄົວກ່ຽວກັບພັດທະນາການຂອງລູກຂອງພວກເຂົາເປັນປົກກະຕິ. ຖາມພວກເຮົາວ່າລູກຂອງພວກເຮົາໄດ້ຮຽນຮູ້ທັກສະໃໝ່ອັນໃດ, ພວກເຂົາອາດຈະມີຄວາມກັງວົນໃຈອັນໃດ ແລະ ແບ່ງປັນການສັງເກດເຫັນຂອງທ່ານເອງ. ບອກໃຫ້ຄອບຄົວຮູ້ວ່າ ພວກເຂົາມີຄວາມກັງວົນໃຈ, ຂໍ້ມູນເພີ່ມເຕີມ ແລະ ການຊ່ວຍເຫຼືອໃຫ້ບໍ່ໂດຍການໂທຫາເບີໂທລະສັບ Help Me Grow Washington. ພວກເຂົາຈະນຳສົ່ງຄອບຄົວໄປຫາ Family Resources Coordinator (FRC) ປະຈຳທ້ອງຖິ່ນຢູ່ໃນພື້ນທີ່ນີ້. ນອກນັ້ນທ່ານຍັງສາມາດໂທຫາ Help Me Grow Washington ເພື່ອຂໍຊື່ ແລະ ເບີໂທລະສັບຂອງ FRC ແລະ ແບ່ງປັນຂໍ້ມູນນີ້ກັບຄອບຄົວໄດ້ໂດຍກົງ.

## ເກີດ - 3 ເດືອນ

*ລູກຂອງທ່ານເຮັດໃນສິ່ງຕໍ່ໄປນີ້ບໍ...*

- ☐ ເງີຍຫົວ ແລະ ຍົກໜ້າເອິກຂຶ້ນເມື່ອຢູ່ເທິງທ້ອງຂອງພວກເຂົາ
- ☐ ເຫັງແຂນ ແລະ ຂາຂອງພວກເຂົາໄປມາໄດ້ງ່າຍໆ
- ☐ ເຮັດຕາມການເຄື່ອນໄຫວຂອງທ່ານໂດຍການປິ່ນຫົວຂອງພວກເຂົາໄປເທື່ອລະດ້ານ
- ☐ ດູດນົມເຕົ້າ ຫຼື ດູດນົມແມ່ໄດ້ດີ
- ☐ ຕົກໃຈ ຫຼື ຮ້ອງໄຫ້ທັນທີເມື່ອໄດ້ຍິນສຽງດັງ
- ☐ ເບິ່ງທ່ານ, ເບິ່ງໜ້າທ່ານ
- ☐ ເຮັດສຽງຫົວດີໃຈ ຫຼື ສຽງຄືນົກຮ້ອງກູ່ງ
- ☐ ຍິ້ມຕອບເມື່ອທ່ານຍິ້ມ ຫຼື ລົມນຳ
- ☐ ເມື່ອຢູ່ສະບາຍງຽບໄດ້ງ່າຍໆ

## 3 - 6 ເດືອນ

*ລູກຂອງທ່ານເຮັດໃນສິ່ງຕໍ່ໄປນີ້ບໍ...*

- ☐ ຫຼິ້ນຕີນເມື່ອອອງຢູ່ຫຼັງ
- ☐ ເງີຍຫົວ ແລະ ຍົກໜ້າເອິກຂຶ້ນດ້ວຍນ້ຳໜັກຂອງພວກເຂົາຢູ່ໃນມືເມື່ອຢູ່ເທິງທ້ອງຂອງພວກເຂົາ
- ☐ ໂງຫົວຂອງພວກເຂົາຂຶ້ນມາຕັ້ງຊື່ ແລະ ນິ່ງໆໂດຍບໍ່ມີການຄ້ຳຊ່ວຍ
- ☐ ກິ້ງໄປມາແຕ່ດ້ານທ້ອງຫາດ້ານຫຼັງ ແລະ ດ້ານຫຼັງຫາດ້ານທ້ອງ
- ☐ ຫຼິ້ນມືຂອງພວກເຂົາເອງໂດຍການເອົາພວກມັນມາແປະໃສ່ກັນ
- ☐ ໄປຫາເຄື່ອງຫຼິ້ນ
- ☐ ຈັບເອົາເຄື່ອງຫຼິ້ນທີ່ຢື້ເອົາໄດ້ເຖິງ
- ☐ ປິ່ນຫົວໄປຕາມສຽງ
- ☐ ເຮັດໄດ້ຫຼາຍສຽງ
- ☐ ສຽງຫົວດັງ
- ☐ ພະຍາຍາມສະແດງອັນທີ່ມັກ ແລະ ບໍ່ມັກ

## 6 - 12 ເດືອນ

*ລູກຂອງທ່ານເຮັດໃນສິ່ງຕໍ່ໄປນີ້ບໍ...*

- ☐ ດຶງຕົວເອງໄປຢືນດ້ວຍການຊ່ວຍເຫຼືອບາງອັນ
- ☐ ນັ່ງຫຼິ້ນເຄື່ອງຫຼິ້ນໂດຍບໍ່ມີການຊ່ວຍ
- ☐ ສົ່ງວັດຖຸຈາກມືເບື້ອງໜ້າໄປອີກເບື້ອງໜຶ່ງ
- ☐ ກິນອາຫານດ້ວຍມືຂອງພວກເຂົາເອງ
- ☐ ຮຽນແບບການໂບກມືບາຍໆ
- ☐ ໃຫ້ທ່ານຮູ້ຈັກຄວາມຕ້ອງການຂອງພວກເຂົາດ້ວຍການເຄື່ອນໄຫວ ແລະ ສຽງ
- ☐ ຮຽນສຽງເວົ້າ ("ບາ-ບາ", "ກາ-ກາ")
- ☐ ປ່ຽນຜຽນໃນຂະນະຫຼິ້ນກັບຜູ້ໃຫຍ່ (ການກະທຳ, ສຽງ ຫຼື ການສະແດງອອກທາງໃບໜ້າ)
- ☐ ໃຫ້ທ່ານຮູ້ວ່າພວກເຂົາເຂົ້າໃຈຄຳຖາມງ່າຍໆ ("ເຈົ້າຢາກໄດ້ອັນໃດຕື່ມບໍ?")
- ☐ ຮູ້ຈັກພໍ່ແມ່ຈາກຄົນແປກໜ້າ

## 12 - 18 ເດືອນ

*ລູກຂອງທ່ານເຮັດໃນສິ່ງຕໍ່ໄປນີ້ບໍ...*

- ☐ ຍ່າງເອງ
- ☐ ເກັບເອົາວັດຖຸນ້ອຍ (ຂະໜາດໝາກອາງຸ່ນແຫ້ງ)
- ☐ ເກັບວັດຖຸໃສ່ກ່ອງ ແລະ ເທຖິ້ມ
- ☐ ເອົາວັດຖຸອັນໜຶ່ງວາງຍອງໃສ່ອັນອື່ນ
- ☐ ກິນອາຫານດ້ວຍບ່ວງ
- ☐ ເວົ້າສອງສາມຄຳຕ່າງກັນ ນອກຈາກຄຳວ່າ "ມາ-ມາ" ຫຼື "ດ່າ-ດ່າ"
- ☐ ຖາມຫາສິ່ງຂອງຕ່າງໆດ້ວຍຄຳເວົ້າ
- ☐ ຈັບ ແລະ ດື່ມຈາກຈອກໂດຍມີການເຮັດເຮ່ຍໄປນຳ
- ☐ ຊີ້ໃສ່ສິ່ງຂອງ ຫຼື ຮູບຫຼາຍອັນເມື່ອເອີ້ນຊື່

## 18 ເດືອນ - 2 ປີ

*ລູກຂອງທ່ານເຮັດໃນສິ່ງຕໍ່ໄປນີ້ບໍ...*

- ☐ ຍ່າງຂຶ້ນ ແລະ ລົງຂັ້ນໄດດ້ວຍການໃຊ້ຮາວມືຈັບ
- ☐ ຂີດງຂຽນງ
- ☐ ເຄື່ອນເຫັງຮ່າງກາຍຂອງພວກເຂົາຕາມເວລາມີສຽງເພງ
- ☐ ເວົ້າສອງຄຳຕໍ່ກັນ ("ນ້ຳໝາກໄມ້ຕື່ມອີກ")
- ☐ ເລີ່ມຖາມຄຳຖາມ, ("ນ້ຳໝາກໄມ້ບໍ?", "ບາຍໆບໍ?")
- ☐ ກິນແຊນວິດເອງ, ກັດເອງ
- ☐ ປົດເກີບ ແລະ ຖົງຕີນ
- ☐ ເບິ່ງຮູບປຶ້ມເລື່ອງນຳຜູ້ໃຫຍ່
- ☐ ເຮັດຕົວເລືອກງ່າຍໆໃນເຄື່ອງຫຼິ້ນ (ຈົກຊໍ່ ຫຼື ລົດບັນທຸກ)
- ☐ ຮຽນແບບການຫຼິ້ນຂອງເດັກຜູ້ອື່ນ (ຖອກຊາຍ, ໂຍນບານ)

## 2 - 3 ປີ *ລູກຂອງທ່ານເຮັດໃນສິ່ງຕໍ່ໄປນີ້ບໍ...*

- ☐ ຍ່າງໄດ້ດີ, ແລ່ນ, ຢຸດ, ກ້າວຂຶ້ນ ແລະ ຫຍໍ້ຕົວລົງ
- ☐ ກອງວັດຖຸຂຶ້ນ 3 ອັນ ຫຼື ຫຼາຍກວ່ານັ້ນ
- ☐ ໃຊ້ບ່ວງ ແລະ ຈອກເອງ
- ☐ ເຮັດຕາມທິດທາງສອງຂັ້ນຕອນ ("ໄປເອົາປຶ້ມ ແລະ ເອົາໄປວາງໄວ້ເທິງໂຕະ")
- ☐ ບອກຊື່ສ່ວນຕ່າງໆຂອງຮ່າງກາຍໄດ້ຫ້າຫາຫົກອັນ
- ☐ ມີສ່ວນຮ່ວມໃນການລົມກັນແບບງ່າຍໆ
- ☐ ຕອບຄຳຖາມງ່າຍໆ "ແມ່ນຫຍັງ" ແລະ "ເຮັດຫຍັງ" ("ເຈົ້າຢາກກິນຫຍັງໃນຕອນທ່ຽງ?")
- ☐ ຊີ້ໃສ່ ຫຼື ບອກຊື່ວັດຖຸເມື່ອບອກການນຳໃຊ້ຂອງພວກມັນ ("ເຈົ້າດື່ມກັບຫຍັງ?")
- ☐ ຊ່ວຍເຮັດວຽກງ່າຍໆ (ການໄປເອົາເຄື່ອງຫຼິ້ນ)
- ☐ ໃຊ້ປະໂຫຍກ 2-3 ຄຳປົກກະຕິ

## 3 - 4 ປີ *ລູກຂອງທ່ານເຮັດໃນສິ່ງຕໍ່ໄປນີ້ບໍ...*

- ☐ ໂດດ, ແລ່ນ, ຂວ້າງ, ປີນ, ໃຊ້ຄວາມດຸນດ່ຽງດີ
- ☐ ແຕ້ມຮູບວົງມົນ, ເສັ້ນ ແລະ ຂີດໄຂ່ວດ້ວຍການໃຊ້ສໍສີ
- ☐ ໃຊ້ເຄື່ອງຫຼິ້ນ ແລະ ວັດຖຸອື່ນໆເພື່ອແກ້ງເປັນການຫຼິ້ນ
- ☐ ມ່ວນນຳປຶ້ມຮູບ ແລະ ທີ່ກຳລັງອ່ານໃຫ້ຟັງ
- ☐ ເຂົ້າໃຈຄຳເວົ້າທີ່ບອກວ່າເຄື່ອງຂອງຢູ່ໃສ (ທາງຫຼັງ, ທາງລຸ່ມ, ຢູ່ໃນ, ຢູ່ເທິງ)
- ☐ ໃຊ້ຄຳເວົ້າທີ່ເຂົ້າໃຈງ່າຍ
- ☐ ຖາມຄຳຖາມ "ເປັນຫຍັງ" ແລະ "ແມ່ນຫຍັງ" ຫຼາຍໆ
- ☐ ຫຼິ້ນມ່ວນນຳເດັກນ້ອຍຄົນອື່ນ
- ☐ ບາງຄັ້ງກໍ່ລໍຖ້າທີ່ຂອງພວກເຂົາ
- ☐ ຕອບຄຳຖາມງ່າຍໆ "ຢູ່ໃສ" ແລະ "ແມ່ນໃຜ"

## 4 - 5 ປີ *ລູກຂອງທ່ານເຮັດໃນສິ່ງຕໍ່ໄປນີ້ບໍ...*

- ☐ ກິ້ງໄປມາ, ເຕັ້ນ ຫຼື ຫຼິ້ນເກມອື່ນທີ່ໃຊ້ກ້າມເນື້ອຫຼາຍ (ເຊັ່ນ: ຂາ)
- ☐ ແຍ່ງແຍະດ້ວຍຕີນດຽວ
- ☐ ແຕ້ມຮູບໃບໜ້າທີ່ຄ້າຍຄືໃບໜ້າ
- ☐ ນຸ່ງເຄື່ອງດ້ວຍການຊ່ວຍເຫຼືອພຽງເລັກນ້ອຍ
- ☐ ຖາມຄຳຖາມດ້ວຍການໃຊ້ "ແມ່ນຫຍັງ, ຢູ່ໃສ, ແມ່ນໃຜ ແລະ ຍ້ອນຫຍັງ"
- ☐ ເວົ້າສຽງຄຳເວົ້າສ່ວນໃຫຍ່ຈະແຈ້ງ ຍົກເວັ້ນສຳລັບ "s, z, th ແລະ r"
- ☐ ໃຊ້ຄຳເວົ້າສະແດງເຖິງຂະໜາດ ແລະ ຕົວເລກ (ໃຫຍ່, ຫຼາຍ)
- ☐ ເວົ້າທັງຊື່ ແລະ ນາມສະກຸນຂອງພວກເຂົາ
- ☐ ຫຼິ້ນມ່ວນກັບເດັກນ້ອຍອາຍຸດຽວກັນ

## 5 - 6 ປີ *ລູກຂອງທ່ານເຮັດໃນສິ່ງຕໍ່ໄປນີ້ບໍ...*

- ☐ ຫຼິ້ນມ່ວນກັບການຈັບ, ຂວ້າງ ແລະ ເຕະບານ
- ☐ ມີຄວາມດຸນດ່ຽງດີ ເມື່ອຫຼິ້ນເກມກ້າມເນື້ອຫຼາຍ (ງູກິນຫາງ, ກິ້ງໄປມາ, ເບສບອລ)
- ☐ ມ່ວນນຳການຕັດດ້ວຍມີດຕັດ
- ☐ ນຸ່ງເຄື່ອງເອງ, ລວມທັງໃສ່ກະດູມ, ຄວ້າເອົາ ແລະ ການຮູດຊິບ
- ☐ ສະແດງຄວາມສົນໃຈໃນການຂຽນຄຳເວົ້າ
- ☐ ລົມຄືກັບຄອບຄົວລົມ (ໃຊ້ຄຳເວົ້າ ແລະ ປະໂຫຍກປະເພດດຽວກັນ)
- ☐ ເຮັດສາມທິດທາງເຫຼົ່ານີ້ຕາມລຳດັບທີ່ໃຫ້ ("ເອົາໝາກບານ, ເອົາມັນໄປໄວ້ໃນກະຕ່າເຄື່ອງຫຼິ້ນ ແລະ ມາທີ່ໂຕະ.")
- ☐ ເວົ້າຊື່ເຕັມ, ອາຍຸ ແລະ ເພດຂອງພວກເຂົາ
- ☐ ມ່ວນນຳການຫຼິ້ນເກມທີ່ຈັດໃຫ້ກັບນ້ອຍຜູ້ອື່ນ (ຊົມອນເວົ້າ, ງູກິນຫາງ)

## ຕິດຕໍ່:


**The Washington State Department of Children, Youth & Families Early Support for Infants and Toddlers Program**

PO Box 40970
Olympia, Washington
98504-0970

**esit@dcyf.wa.gov**

**www.dcyf.wa.gov/services/child-development-supports/esit**

**Help Me Grow Washington**
ໂທລະສັບ: 1-800-322-2588



*DCYF ບໍ່ມີການຈຳແນກ ແລະ ໃຫ້ໂອກາດທີ່ເທົ່າທຽມແກ່ທຸກຄົນ ໃນການເຂົ້າຫາໂຄງການ ແລະ ການບໍລິການຂອງຕົນ ໂດຍບໍ່ຄຳນຶງເຖິງເຊື້ອຊາດ, ສີຜິວ, ເພດ, ສາດສະໜາ, ຄວາມເຊື່ອ, ສະຖານະທາງຄອບຄົວ, ຊາດກຳເນີດ, ລົດສະນິຍົມທາງເພດ, ອາຍຸ, ສະຖານະນັກຮົບເກົ່າ ຫຼື ການມີຄວາມພິການທາງຮ່າງກາຍ, ທາງປະສາດສຳຜັດ ຫຼື ທາງຈິດໃຈ.*

*ຖ້າທ່ານຕ້ອງການສຳເນົາຂອງເອກະສານນີ້ໂດຍບໍ່ເສຍຄ່າໃນຮູບແບບອື່ນ ຫຼື ພາສາອື່ນ, ກະລຸນາຕິດຕໍ່ DCYF Constituent Relations (ຫ້ອງການປະຊາສຳພັນກັບຜູ້ມີສ່ວນຮ່ວມຂອງ DCYF) ທີ່ເບີ 1-800-723-4831 ຫຼື ສົ່ງອີເມວຫາ communications@dcyf.wa.gov.*



DCYF PUBLICATIONS FS_0030 | DEL 11-002 LA (07-2023) Laotian